**ມິຊຊາອາທິດທີ 19 ກຳນົດທຳມະດາປີ A**

**ວັນທີ 9 ສິງຫາ 2020**



**ພຣະວໍລະສານໂດຍນັກບຸນມັດເທວ 14, 22-33**

ໃນເວລານັ້ນ, ຫລັງຈາກທີ່ໄດ້ລ້ຽງຝູງຊົນໃນທີ່ປ່ຽວແລ້ວ ພຣະເຢຊູເຈົ້າສັ່ງບອກພວກສາວົກໃຫ້ລົງເຮືອອີກແລະຂ້າມໄປຝັ່ງນັ້ນກ່ອນພຣະອົງ, ຂະນະທີ່ພຣະອົງກຳລັງບອກຝູງຄົນໃຫ້ກັບເມືອ. ແລະເມື່ອທຸກຄົນໄປໝົດແລ້ວ, ພຣະອົງກໍສະເດັດຂຶ້ນພູເພື່ອພາວະນາຕ່າງຫາກ. ຈົນຄ່ຳລົງ ພຣະອົງກໍຢູ່ທີ່ນັ້ນລຳພັງແຕ່ຜູ້ດຽວ. ສ່ວນເຮືອກໍອອກໄປຮອດກາງທະເລແລ້ວ ຟອງກຳລັງຊັດເຂົ້າເຮືອຍ້ອນໄປທວນລົມ. ພໍເຖິງເວລາສີ່ໂມງເຊົ້າ, ພຣະອົງກໍສະເດັດຍ່າງເທິງຫລັງນ້ຳທະເລໄປຫາພວກເຂົາ. ເມື່ອເຫັນພຣະເຢຊູເຈົ້າໄຕ່ຫລັງນ້ຳທະເລມາດັ່ງນັ້ນ, ພວກສາວົກຕ່າງຄົນກໍຕົກໃຈເວົ້າກັນວ່າ: “ຜີຫລອກ!” ທຸກຄົນຢ້ານແລະພາກັນຮ້ອງຂຶ້ນ. ແຕ່ວ່າ ທັນໃດນັ້ນ ພຣະເຢຊູເຈົ້າກ່າວແກ່ພວກເຂົາວ່າ: “ຈົ່ງໝັ້ນໃຈເຖີດ! ແມ່ນເຮົາເອງ, ຢ່າຢ້ານເລີຍ.” ຍິນດັ່ງນັ້ນ, ເປໂຕຣ ທູນຕອບວ່າ: “ພຣະອົງເຈົ້າ, ຖ້າຫາກແມ່ນພຣະອົງແລ້ວໂຜດສັ່ງໃຫ້ຂ້ານ້ອຍຍ່າງເທິງຫລັງນ້ຳໄປຫາພຣະອົງເທີ້ນ”. ພຣະເຢຊູເຈົ້າກ່າວວ່າ: “ມາໂລດ”. ເປໂຕຣລົງຈາກເຮືອແລະຍ່າງເທິງຫລັງນ້ຳໄປຫາພຣະອົງ. ແຕ່ເມື່ອເຫັນລົມແຮງຫລາຍ,ເປໂຕຣກໍຮູ້ສຶກຢ້ານແລະເລີ່ມຈະຈົມລົງ. ເພິ່ນຈຶ່ງຮ້ອງຂຶ້ນວ່າ: “ພຣະອົງເຈົ້າ! ຊ່ວຍຂ້ານ້ອຍແດ່ທ້ອນ!” ທັນທີ ພຣະເຢຊູເຈົ້າກໍເດ່ພຣະຫັດຈັບເອົາ, ພ້ອມກ່າວວ່າ: “ຄົນຄວາມເຊື່ອນ້ອຍ! ເປັນຫຍັງ ເຈົ້າຈຶ່ງໄດ້ສົງໃສ?” ແລະເມື່ອທັງສອງຂຶ້ນເຮືອແລ້ວ, ລົມກໍສະຫງັດລົງ. ສ່ວນພວກທີ່ຢູ່ໃນເຮືອທຸກຄົນຂາບລົງຕໍ່ພຣະພັກພຣະອົງ, ພ້ອມທູນວ່າ: “ຈິງແທ້, ພຣະອົງແມ່ນພຣະບຸດຂອງພຣະເປັນເຈົ້າ”.

ນີ້ແມ່ນວາຈາຂອງພຣະຄຣິສໂຕເຈົ້າ

**ບົດແບ່ງປັນ: ມທ 14, 22-33**

ວາຈາພຣະເຈົ້າວັນອາທິດນີ້ສືບຕໍ່ຈາກອາທິດທີ່ຜ່ານມາ ເມື່ອພຣະເຢຊູເຈົ້າລ້ຽງເກືອຝູງຄົນເປັນຈຳນວນຫ້າພັນຄົນຢູ່ທີ່ປ່ຽວ ດ້ວຍເຂົ້າໜົມປັງຫ້າກ້ອນແລະປາສອງໂຕ. ເປັນການທະວີເຂົ້າໜົມປັງເທື່ອທຳອິດຂອງພຣະເຢຊູເຈົ້າໃນພຣະວໍລະສານໂດຍນັກບຸນມັດເທວ. ຫລັງຈາກທີ່ຝູງຄົນໄດ້ກິນອີ່ມໜຳສຳລານແລ້ວ, ພຣະເຢຊູເຈົ້າກໍສັ່ງພວກເຂົາກັບເມືອບ້ານເຮືອນຂອງຕົນ. ເປັນຫຍັງພຣະເຢຊູເຈົ້າຈຶ່ງສັ່ງຝູງຄົນເມືອທັນທີຫລັງຈາກໄດ້ລ້ຽງເກືອພວກເຂົາ? ນັກບຸນຢວງຜູ້ຂຽນພຣະວໍລະສານໄດ້ອະທິບາຍໃຫ້ພວກເຮົາຮູ້ວ່າ: "ຝູງຄົນຫລັງຈາກທີ່ໄດ້ເຫັນເຄື່ອງໝາຍແຫ່ງການທະວີເຂົ້າໜົມປັງຂອງພຣະເຢຊູເຈົ້າເລີຍເວົ້າກັນວ່າ: "ທ່ານຜູ້ນີ້ແມ່ນປະພາສົກທີ່ຕ້ອງມາໃນໂລກນີ້". ເມື່ອພຣະເຢຊູເຈົ້າຮູ້ຈັກວ່າເຂົາເຫລົ່ານັ້ນຈະຈັບພຣະອົງໄປແຕ່ງຕັ້ງໃຫ້ເປັນກະສັດ, ພຣະອົງເລີຍຜີກຕົວໜີຂຶ້ນພູແຕ່ຜູ້ດຽວອີກເທື່ອໜຶ່ງ" (ຢງ 6, 14-15).

ສ່ວນພວກລູກສິດກໍລົງເຮືອຂ້າມໄປຝັ່ງພຸ້ນກ່ອນພຣະອົງ. ເວລາກຳລັງຂ້າມຝັ່ງໄປນັ້ນ ກໍເກີດມີຄື້ນຟອງຊັດເຂົ້າໃນເຮືອທຳໃຫ້ພວກລູກສິດມີຄວາມຢ້ານກົວ. ສ່ວນພຣະເຢຊູເຈົ້າ, ພຣະອົງກໍຍ່າງເທິງຫລັງນໍ້າທະເລມາຫາພວກເຂົາ. ເປັນການສຳແດງພຣະອົງຄັ້ງທຳອິດໃຫ້ພວກລູກສິດເຫັນກ່ອນການສຳແດງພຣະກາຍພຣະອົງຮຸ່ງເຮືອງບົນພູເຂົາ (ມທ 17). ຖ້າການສຳແດງພຣະກາຍຮຸ່ງເຮືອງຂອງພຣະເຢຊູເຈົ້າບົນພູເຂົາເປັນເຄື່ອງໝາຍບອກລ່ວງໜ້າເຖິງການກັບເປັນຄືນມາຢ່າງຮຸ່ງເຮືອງຂອງພຣະອົງຫລັງຄວາມຕາຍແລ້ວ; ວັນນີ້ການທີ່ພຣະເຢຊູເຈົ້າຍ່າງເທິງຫລັງ ນໍ້າທະເລແລະບັງຄັບລົມພະຍຸກໍເປັນເຄື່ອງໝາຍສຳແດງໃຫ້ພວກລູກສິດຮູ້ວ່າ ພຣະອົງມີລິດອຳນາດເໜືອສິ່ງສ້າງທັງຫລາຍ. ພຣະອົງສາມາດຊະນະມານຮ້າຍອັນເປັນເຄື່ອງໝາຍແຫ່ງລົມພະຍຸ ແລະຄວາມຕາຍອັນເປັນເຄື່ອງໝາຍແຫ່ງທະເລ. ຫລືເວົ້າອີກຢ່າງ, ພຣະເຢຊູເຈົ້າມີໄຊຊະນະເໜືອຄວາມຕາຍ. ສ່ວນພວກລູກສິດ, ຍ້ອນຄວາມຢ້ານກົວຕໍ່ລົມພະຍຸແລະຄື້ນຟອງທະເລທຳໃຫ້ພວກເຂົາຂາດຄວາມເຊື່ອແລະບໍ່ເຫັນພຣະເຢຊູເຈົ້າ. ເພາະນັກບຸນມັດເທວບອກໃຫ້ພວກເຮົາຮູ້ວ່າ ເມື່ອພວກລູກສິດເຫັນພຣະເຢຊູເຈົ້າຍ່າງເທິງຫລັງນໍ້າທະເລມາຫາພວກເຂົາ, ພວກເຂົາກໍຄິດວ່າແມ່ນຜີຫລອກ.

**ພາວະນາ**

ໂອພຣະເຈົ້າ, ເມື່ອລູກຕ້ອງປະເຊີນໜ້າກັບໄພອັນຕະລາຍຕ່າງໆທີ່ມານາບຄູ່ຊີວິດຂອງລູກ ບໍ່ວ່າຈະເປັນພະຍາດໂລຄາ, ການຂາດແຄນອາຫານການກິນ, ການຂາດເຂີນເງິນຄຳ, ການຂາດຄວາມຮັກ. ສິ່ງເຫລົ່ານີ້ທຳໃຫ້ລູກມີຄວາມຢ້ານກົວ, ກະວົນກະວາຍແລະຂາດຄວາມເຊື່ອບໍ່ເຫັນພຣະອົງຍ່າງເຂົ້າມາຫາລູກ. ຂໍພຣະອົງໂຜດເພີ່ມທະວີຄວາມເຊື່ອໃນຕົວລູກໃຫ້ເຂັ້ມແຂງຂຶ້ນແຕ່ລະວັນ ເພື່ອລູກຈະໄດ້ຍິນສຽງຂອງພຣະອົງທີ່ກ່າວກັບລູກໃນຍາມອັນຕະລາຍວ່າ: "ຢ່າຢ້ານກົວເລີຍ" ເພາະເຮົາໄດ້ຊະນະໂລກແລ້ວ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ